ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔ກູລ/ປພຖຊ/໐໔໑໐໑໐**

# ຖແລງການ

## ການຕໍ່ສູ້ແບບສັນຕິວິທີ ກ້າວເຂົ້າສູ່ ໄຊຊນະຢ່າງໝັກແໜ້ນ.

ການຕໍ່ສູ້ແບບສັນຕິວິທີ ເປັນການຕໍ່ສູ້ ທີ່ປາສະຈາກ ການໃຊ້ກຳລັງຮຸນແຮງ ເຊິ່ງປະຫັດປະຫານກັນ ປະເພດ ມີເຈົ້າ-ບໍ່ມີຂ້ອຍ! ເປັນການຕໍ່ສູ້ ໃຫ້ມີການປະຕິບັດ ກົດໝາຍ ເພື່ອຮັບປະກັນ ໃຫ້ປະຊາຊົນ ມີສິດທິເສຣີພາບ ປະຊາທິປະໄຕ ປະເທດຊາດ ຕ້ອງມີຄວາມເປັນເອກຣາດແລະປະຊາຊົນຕ້ອງມີຄວາມ ເປັນເອກພາບກັນ. ມັນແມ່ນການຕໍ່ສູ້ ເພື່ອຢູ່ຮ່ວມກັນຢ່າງສັນຕິ ແລະມີເປົ້າໝາຍຊ່ວຍເຫລືອກັນ ເພື່ອ ປັບປຸງ ແກ້ໄຂ ໃນສິ່ງທີ່ມີຢູ່ແລ້ວ ໃຫ້ດີຂຶ້ນກວ່າເກົ່າ. ເຮັດໃຫ້ປະເທດຊາດ ຮັ່ງມີເຂັ້ມແຂງ, ກ້າວໜ້າ ທັນສມັຍ ແລະມີຄວາມຈເຣີນ ສີວິໄລ.

ການເຂົ້າມາມີອຳນາດ ຂອງພັກຣັດ ໃນປີ 1975 ໄດ້ສ້າງຄວາມຫວັງ ໃຫ້ແກ່ປະຊາຊົນລາວ ຢ່າງບໍ່ເຄີຍມີມາກ່ອນ. ເພາະມັນແມ່ນການຢຸດຕິສົງຄາມອັນຍືດເຍື້ອຍາວນານເຖິງ 30 ປີ. ປະຊາຊົນລາວ ທັງຊາດມີຄວາມຫວັງວ່າ ສັນຕິພາບ ຄວາມຖືກຕ້ອງປອງດອງຂອງຊາດ, ເອກຣາດ ແລະຄວາມ ເປັນເອກພາບ ຂອງຄົນໃນຊາດ ຈະໄດ້ຖືກປົກປັກຮັກສາ ແລະຮັບປະກັນ. ແຕ່ ພັກຣັດ, ຊ້ຳພັດ ນຳເອົາການບໍຣິຫານປະເທດ ແບບຄອມມິວນິສ ວຽດນາມ ເຂົ້າມາປົກຄອງຊຶ່ງເຮັດໃຫ້ປະຊາຊົນລາວ ໄດ້ຮັບຄວາມຜິດຫວັງຢ່າງໃຫຍ່ຫລວງ!

ພັກຣັດ ເລັ່ງປະຕິບັດ ເພື່ອຜົນປໂຍດແລະອຸດົມການ ຂອງຕ່າງຊາດດ້ວຍການຈັບກຸມປະຊາຊົນ ຢ່າງບໍ່ມີການສືບສວນ. ບັງຄັບເອົາໄຮ່ນາສ່ວນຕົວ ໄປເຮັດນາລວມໝູ່, ເກັບພາສີກະສິກຳ ໂດຍ ບໍ່ຍົກເວັ້ນຊາວນາຜູ້ຍາກຈົນ. ຕ້ານການເຊື່ອຖືສາສນາປະເພນີ, ແບ່ງແຍກຄົນລາວຣະບອບເກົ່າ ຄົນລາວ ຣະບອບໃໝ່. ຈັບກຸມຄົນຣະບອບເກົ່າ ໄປເຂົ້າສູນສັພທຸກຍາວນານ!

ດັ່ງນັ້ນ, ການກະທຳ ຕາມແຜນຣຸກລານຂອງຊາດຕ່າງດ້າວ ຢ່າງໄຮ້ມະນຸສທັມຂອງພັກຣັດ, ຈຶ່ງຖືກປະຊາຊົນ ຕໍ່ຕ້ານຄືນ ຢ່າງສຸດຊີດເໝືອນກັນ. ເພາະມັນເປັນການຕໍ່ສູ້ ເພື່ອໃຫ້ມີຊີວິດຢູ່ລອດ ແລະເພື່ອປົກປັກຮັກສາ ຄວາມເປັນຊາດຂອງລາວ ໄວ້ໃຫ້ຍືນຍົງຄົງຢູ່. ການຕໍ່ສູ້ ຂອງປະຊາຊົນ ໄດ້ປະຕິບັດໄປ ຢ່າງສັນຕິ, ສລາດ ແລະຮອບຄອບທີ່ສຸດ, ເພື່ອຫລີກເວັ້ນການຈັບກຸມ. ເປັນຕົ້ນ ບໍ່ປະກອບວຽກງານ ຂອງພັກຣັດ, ບໍ່ປະຕິບັດ ມະຕິຂອງພັກຣັດ. ເຮັດໃຫ້ການບໍຣິຫານງານ ຂອງພັກຣັດຫລົ້ມເຫລວ, ຕົກເຂົ້າຢູ່ໃນວາຣະຫຍຸ້ງຍາກ, ເສຖກິດປັ່ນປ່ວນ, ເງິນກີບຕົກຣາຄາ, ພັກນັກງານປະຕິວັດ ຖືກປັດເຊັ່ຽອອກ ໃຫ້ຕົກທຸກຍາມເຖົ້າແກ່ຊະຣາ. ການເຮັດນາລວມໝູ່, ໄດ້ເຂົ້າ ບໍ່ກຸ້ມກິນ. ການເກັບພາສີກະສິກຳ ບໍ່ໄດ້ຕາມກຳນົດ. ພັກຣັດ ຕ້ອງໄດ້ຂໍການຊ່ວຍເຫລືອ ຈາກປະເທດເສຣີທັງຫລາຍ.

ພັກແລະກຳລັງທັບເສຣີປະຊາທິປະໄຕລາວ ໄດ້ສ້າງຕັ້ງຂຶ້ນຢ່າງເປັນທາງການ ໃນວັນທີ 1/3/84 ສືບຕໍ່ປຸກຣະດົມ ແລະຈັດຕັ້ງມວນຊົນ ລຸກຂຶ້ນຕໍ່ສູ້ ຕາມແນວທາງສັນຕິວິທີ ໂດຍຖືເອົາຫລັກ ສິດທິມະນຸດ ຕາມກົດບັດສະຫະປະຊາຊາດ ເປັນອາວຸດ ຂອງການຕໍ່ສູ້, ພ້ອມທັງຮຽກຮ້ອງ ໃຫ້ ອົງການຈັດຕັ້ງສາກົນ ບີບຣັດ ໃຫ້ພັກຣັດ ຕ້ອງເຄົາຣົບ ຕໍ່ສິດທິເສຣີພາບ ຂອງພົລເມືອງລາວ. ໃນທີ່ສຸດ, ປີ 1985, ພັກຣັດກໍໄດ້ຍອມປ່ຽນແປງ ທາງດ້ານເສຖກິດແລະສັງຄົມ. ການເຮັດນາລວມໝູ່ສັງຄົມນິຍົມ, ການຜູກຂາດ ທາງດ້ານເສຖກິດ, ການຕ້ານຢັ້ນ ຂັດຂວາງໃນດ້ານສາສນາປະເພນີຕ່າງໆເຫລົ່ານີ້ ກໍມິດງຽບ ຫາຍໄປ, ກັບມາເປັນການອູ້ມຊູສົ່ງເສີມ. ມັນເປັນການ ສລຸບຜົນງານ ອັນຫລົ້ມເຫລວຂອງພັກປະຊາຊົນ ປະຕິວັດລາວ ໃນການນຳພາ ແລະບໍຣິຫານປະເທດຊາດ ຜ່ານລະຍະ10 ປີ. ອັນນີ້, ມັນແມ່ນ ໄຊຊະນະ ເບື້ອງຕົ້ນ ໃນການຕໍ່ສູ້ຂອງປະຊາຊົນລາວທັງຊາດ.

ການຕໍ່ສູ້ ຂອງປະຊາຊົນລາວ ຕາມແນວທາງສັນຕິວິທີ ພາຍໃຕ້ການນຳພາ ຂອງພວກເຮົາປະຊາຊົນ ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ, ກໍຄືປະຊາຊົນລາວທັງຊາດ ຜ່ານລະຍະ 26 ປີ ຄືແຕ່ປີ 1984-2010 ໄດ້ມີບາດກ້າວອັນໜັກແໜ້ນ ໄປສູ່ການສ້າງຄວາມສາມະຄີປອງດອງຊາດ, ຍ້ອນພັກຣັດ ໄດ້ມີທ່າອ່ຽງ ຈາກການບໍຣິຫານປະເທດ ແບບປ່າເຖື່ອນ ໃຊ້ກຳລັງປາບປາມ ມາບໍຣິຫານ ໃຊ້ກົດໝາຍ ຕາມທີ່ສາກົນບີບຣັດ, ພຽງແຕ່ກົດໝາຍ ທີ່ພັກຣັດ ແຕ່ງຂຶ້ນມານັ້ນ, ບໍ່ໄດ້ຮັບໃຊ້ຜົນປໂຍດ ຂອງຊາດ ຂອງປະຊາຊົນ ເທົ່າທີ່ຄວນ, ຊຶ່ງສາກົນ ຕ້ອງບີບຣັດເຂັ້ງຂຶ້ນກວ່າເກົ່າ, ເພາະມັນເປັນພຽງກົດໝາຍ ປົກປ້ອງສິດຜົນປໂຍດ ຂອງອຳນາດ ຜເດັດການ ແລະຫລອກລວງຊາວໂລກເທົ່ານັ້ນເອງ!. ຍິ່ງພັກຣັດປະຕິບັດກົດໝາຍ ປົກປ້ອງສິດຜົນປໂຍດ ຂອງຕົນເອງ ຫລາຍເທົ່າໃດ ຜົນເສັຽຫາຍ

ແລະຄວາມເດືອດຮ້ອນ ຂອງປະຊາຊົນ ກໍຍິ່ງຫລາຍຂຶ້ນ, ແລະ ມັນກໍດຶງດູດ ໃຫ້ສາກົນ ຫັນໜ້າເຂົ້າມາ ແກ້ໄຂບັນຫາລາວ ຢ່າງເອົາຈິງເອົາຈັງເໝືອນກັນ.

ພັກຣັດ ຕົກຢູ່ໃນທ່າຮັບ ຈົນຕາເຈເຫລືອທີ່ສຸດ! ບໍ່ພຽງແຕ່ ປະຊາຊົນລາວ ທັງໃນ ແລະ ນອກປະເທດ ບໍ່ໃຫ້ການອູ້ມຊູສນັບສນູນເທົ້ານັ້ນ, ວຽດນາມ ຊໍ້າພັດສນັບສນູນ ໃຫ້ຄວາມສັມພັນ ລະຫວ່າງລາວກັບສະຫະຣັດ ໄດ້ຈເຣີນງອກງາມ ຍິ່ງໆຂຶ້ນໄປຊຶ່ງບໍ່ເຄີຍມີມາກ່ອນເລີຍໃນອະດີດ. ອັນນີ້, ກໍຄືສັນຍານບົ່ງບອກ ເຖິງບັ້ນອາວະສານ ຂອງອຳນາດຜເດັດການໃນລາວ ຢ່າງບໍ່ຕ້ອງສົງສັຍ.

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ ຮຽກຮ້ອງມາຍັງ ອົງການຈັດຕັ້ງສາກົນ ແລະບັນດາປະເທດເພື່ອນມິດ ໃນທົ່ວໂລກ ຈົ່ງໄດ້ບີບຣັດ ໃຫ້ ພັກຣັດ ອອກມາໂອ້ລົມ ກັບພວກເຮົາ ເພື່ອພ້ອມກັນ ເຮັດໃຫ້ຄວາມຫວັງ ຂອງປະຊາຊົນລາວ ຢາກມີສິດທິເສຣີພາບ ປະຊາທິປະໄຕ, ປະເທດຊາດ ມີຄວາມເປັນເອກຣາດ ແລະປະຊາຊົນ ມີຄວາມເປັນເອກພາບກັນນັ້ນ, ໃຫ້ເກີດມີຂຶ້ນ ຢ່າງເປັນຮູບພຣະທັມໂດຍໄວ.

ປະຊາຊົນມີໄຊຍ໌ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ.

ຂໍຂອບໃຈ

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ຫ້ອງການປະທານພັກ**

**ອາຈານ ສົມນຶກ ຟອງສູວັນ**

**ວັນທີ ໑໐ ເມສາ ໔໐໑໐.**